ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 1753 /ກປ

ນະຄອນຫຼວງວຽງຈັນ, ວັນທີ 25 AUG 2020

# ຄຳແນະນຳ
# ກ່ຽວກັບ ການຂຶ້ນທະບຽນສະຖານທີ່ປະກອບການຜະລິດ ສຳລັບ ການສົ່ງອອກ ພືດ ແລະ ຜະລິດຕະພັນພືດ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ໜັງສືສະເໜີ ຂອງກົມປູກຝັງ ເລກທີ 1586/ກປຝ, ລົງວັນທີ 07 ສິງຫາ 2020;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງກົມນະໂຍບາຍ ແລະ ນິຕິກຳ ເລກທີ 597/ກນບ, ລົງວັນທີ 11 ສິງຫາ 2020.

ໃນໄລຍະຜ່ານມາ ລັດຖະບານ ໄດ້ມີນະໂຍບາຍສົ່ງເສີມການຜະລິດເປັນສິນຄ້າ ເຮັດໃຫ້ມີການແລກປ່ຽນຄ້າຂາຍຜະລິດຕະພັນພືດກະສິກຳ ກັບພາກພື້ນ ແລະ ສາກົນ ນັບມື້ນັບເພີ່ມຂຶ້ນ, ສ້າງລາຍຮັບໃຫ້ປະຊາຊົນ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດໄດ້ເປັນຢ່າງດີ; ແຕ່ເຖິງຢ່າງໃດກໍຕາມ ການແລກປ່ຽນ, ຄ້າຂາຍດັ່ງກ່າວ ຍັງບໍ່ທັນມີການຄຸ້ມຄອງຢ່າງເປັນລະບົບ ເລີ່ມຈາກສວນປູກ ໄປຈົນເຖິງການສົ່ງອອກ ນອກນີ້, ຍັງມີບາງທ້ອງຖິ່ນໄດ້ມີການຈົດທະບຽນ ແລະ ຢັ້ງຢືນສວນປູກ ທີ່ບໍ່ທັນສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ ແລະ ອານຸສັນຍາດ້ານສຸຂານາໄມພືດ ທີ່ລັດຖະບານ ສປປ ລາວ ໄດ້ລົງນາມຮ່ວມກັບປະເທດນຳເຂົ້າ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດ ການຄຸ້ມຄອງສະຖານທີ່ປະກອບການຜະລິດ ສຳລັບ ການສົ່ງອອກພືດ ແລະ ຜະລິດຕະພັນພືດ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງ ຕາມກົດໝາຍວ່າດ້ວຍການປ້ອງກັນ ແລະ ກັກກັນພືດ ລວມທັງລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ສຳລັບ ການນຳເຂົ້າຂອງປະເທດຄູ່ຄ້າ ນັ້ນ.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:**

## I. ຈຸດປະສົງ ແລະ ລະດັບຄາດໝາຍ

- ເພື່ອແນະນຳການຈັດຕັ້ງປະຕິບັດ ໝວດທີ 3 ຂອງ ຂໍ້ຕົກລົງວ່າດ້ວຍ ມາດຕະການສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2986/ກປ, ລົງວັນທີ 28 ມິຖຸນາ 2019;
- ເພື່ອກຳນົດກົນໄກການປະສານງານ ແລະ ແບ່ງຄວາມຮັບຜິດຊອບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນໃນການຂຶ້ນທະບຽນສະຖານທີ່ປະກອບການຜະລິດ ສຳລັບ ການສົ່ງອອກ ພືດ ແລະ ຜະລິດຕະພັນພືດ;

- ເພື່ອຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ກ່ຽວກັບ ຂັ້ນຕອນ ແລະ ວິທີການ ການຂຶ້ນທະບຽນສະຖານທີ່ປະກອບການຜະລິດ ສໍາລັບ ການສົ່ງອອກ ພືດ ແລະ ຜະລິດຕະພັນພືດ.

## II. ຄວາມໝາຍ ແລະ ຄວາມສໍາຄັນ ຂອງການຂຶ້ນທະບຽນສະຖານທີ່ປະກອບການຜະລິດ

ສະຖານທີ່ປະກອບການຜະລິດ ໝາຍເຖິງ ສວນປູກ ຫຼື ຟາມ, ໂຮງເຮືອນຫຸ້ມຫໍ່ບັນຈຸ, ຖັງໄຊໂລ ຫຼື ສະຖານທີ່ ທີ່ມີເປົ້າໝາຍເພື່ອ ປູກ, ເກັບກ່ຽວ, ຄັດແຍກ, ຈັດການ, ບັນຈຸ, ຫຸ້ມຫໍ່ ຫຼື ເກັບຮັກສາ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ມີເປົ້າໝາຍເພື່ອສົ່ງອອກ.

ການຂຶ້ນທະບຽນ ສະຖານທີ່ປະກອບການຜະລິດ ແມ່ນ ຂະບວນກວດກາ ແລະ ປະເມີນ ສະຖານທີ່ປະກອບການຜະລິດ ເຊັ່ນ: ສວນປູກ ຫຼື ຟາມ, ໂຮງເຮືອນຫຸ້ມຫໍ່ບັນຈຸ, ສາງເກັບມ້ຽນ, ຖັງໄຊໂລ ຫຼື ສະຖານທີ່ອື່ນ ທີ່ມີເປົ້າໝາຍເພື່ອສົ່ງອອກ ໃນການຈັດຕັ້ງປະຕິບັດມາດຕະການສຸຂານາໄມພືດ ຕາມຂໍ້ກໍານົດເງື່ອນໄຂຂອງປະເທດນໍາເຂົ້າ ເພື່ອຢັ້ງຢືນ ແລະ ຮັບຮອງ ສະຖານທີ່ປະກອບການຜະລິດ ພືດ ແລະ ຜະລິດຕະພັນພືດ ເພື່ອສົ່ງອອກ.

## III. ຫຼັກການ, ຂັ້ນຕອນ ແລະ ວິທີການ ຂຶ້ນທະບຽນສະຖານທີ່ປະກອບການຜະລິດ

### 1. ຫຼັກການ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຊຶ່ງປະເທດນໍາເຂົ້າ ກໍານົດໃຫ້ມີໃບທະບຽນສະຖານທີ່ປະກອບການຜະລິດ ຕ້ອງໄດ້ຂຶ້ນທະບຽນນໍາກົມປູກຝັງ ຕາມທີ່ກໍານົດໄວ້ໃນຄໍາແນະນໍາສະບັບນີ້.

### 2. ຂັ້ນຕອນ ແລະ ວິທີການ ຂຶ້ນທະບຽນສະຖານທີ່ປະກອບການຜະລິດ

#### 2.1. ການສະເໜີ ຂໍຂຶ້ນທະບຽນສະຖານທີ່ປະກອບການຜະລິດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂຶ້ນທະບຽນສະຖານທີ່ປະກອບການຜະລິດ ຕ້ອງຍື່ນຄໍາຮ້ອງ ຕາມແບບພິມ ກກພ 17 ໃນເອກະສານຊ້ອນທ້າຍ 1 ຂອງຄໍາແນະນໍາສະບັບນີ້ ຫຼື ສາມາດດາວໂຫຼດ ໃນເວບໄຊຂອງກົມປູກຝັງ www.doa.maf.gov.la ພ້ອມທັງປະກອບຊຸດເອກະສານຄົບຖ້ວນ ຕາມທີ່ກໍານົດໄວ້ໃນຂໍ້ 2.2 ຂອງຄໍາແນະນໍາສະບັບນີ້ ຕໍ່ ຂະແໜງປູກຝັງຂັ້ນແຂວງທີ່ກ່ຽວຂ້ອງ ເພື່ອພິຈາລະນາ.

#### 2.2. ການປະກອບຊຸດເອກະສານ

ຊຸດເອກະສານສະເໜີຂໍຂຶ້ນທະບຽນສະຖານທີ່ປະກອບການຜະລິດ ມີດັ່ງນີ້:

1. ໃບຄໍາຮ້ອງ ຕາມແບບພິມ ກກພ 17 ໃນເອກະສານຊ້ອນທ້າຍ 1 ຂອງຄໍາແນະນໍາສະບັບນີ້;
2. ສໍາເນົາ ໃບອະນຸຍາດດໍາເນີນກິດຈະການກະສິກໍາ ແລະ ປ່າໄມ້;
3. ສໍາເນົາ ໃບຢັ້ງຢືນການມອບພັນທະອາກອນ ປະຈໍາປີສຸດທ້າຍ;
4. ຄູ່ມືການດໍາເນີນງານ ກ່ຽວກັບ ການຜະລິດພືດ ແລະ ແບບແຜນການຈັດການສັດຕູພືດ ຂອງຜູ້ປະກອບການ ຕາມແບບພິມ ກກພ 18 ໃນເອກະສານຊ້ອນທ້າຍ 2 ຂອງຄໍາແນະນໍາສະບັບນີ້;
5. ໃບມອບສິດ ແລະ ສໍາເນົາບັດປະຈໍາຕົວຂອງຜູ້ຍື່ນເອກະສານ ໃນກໍລະນີໃຫ້ຜູ້ອື່ນມາຍື່ນຄໍາຮ້ອງແທນ;

#### 2.3. ການພິຈາລະນາການຢັ້ງຢືນສະຖານທີ່ປະກອບການຜະລິດ

ພາຍຫຼັງທີ່ໄດ້ຮັບຊຸດເອກະສານສະເໜີຂໍຂຶ້ນທະບຽນສະຖານທີ່ປະກອບການຜະລິດ ແລ້ວ, ຂະແໜງປູກຝັງຂັ້ນແຂວງ ຕ້ອງດໍາເນີນການກວດກາຊຸດເອກະສານ ດັ່ງກ່າວ, ຖ້າເຫັນວ່າບໍ່ຄົບຖ້ວນ ຕາມທີ່ກໍານົດໄວ້ໃນຂໍ້ 2.2 ຂອງຄໍາແນະນໍາສະບັບນີ້ ຕ້ອງໃຫ້ຜູ້ສະເໜີ ປະກອບເອກະສານຄືນ. ໃນກໍລະນີເອກະສານດັ່ງກ່າວ ຫາກຄົບຖ້ວນແລ້ວ ຕ້ອງດໍາເນີນການຄົ້ນຄວ້າ ແລະ ລົງກວດກາປະເມີນສະຖານທີ່ປະກອບການຜະລິດ ພ້ອມທັງ ອອກໃບຢັ້ງຢືນການກວດກາສະຖານທີ່ປະກອບການຜະລິດ ຕາມແບບພິມໃນເອກະສານຊ້ອນທ້າຍ 3 ຂອງຄໍາແນະນໍາສະບັບນີ້ ພາຍໃນ ເຈັດ ວັນ.

ການກວດກາປະເມີນສະຖານທີ່ປະກອບການຜະລິດ ຕ້ອງດຳເນີນຕາມເງື່ອນໄຂຂອງການຂຶ້ນທະບຽນທີ່ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດ ສຳລັບ ການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2986/ກປ, ລົງວັນທີ 28 ມິຖຸນາ 2019 ໂດຍມີການເຂົ້າຮ່ວມຂອງໜ່ວຍງານປູກຝັງຂັ້ນເມືອງທີ່ກ່ຽວຂ້ອງ.

**2.4. ການຂຶ້ນທະບຽນສະຖານທີ່ປະກອບການຜະລິດ**

ຂະແໜງປູກຝັງຂັ້ນແຂວງ ຕ້ອງນຳສົ່ງຊຸດເອກະສານ ແລະ ໃບຢັ້ງຢືນກວດກາສະຖານທີ່ປະກອບການຜະລິດ ເພື່ອສະເໜີ ເຖິງ ກົມປູກຝັງ ພາຍໃນ ສາມ ວັນລັດຖະການ ນັບແຕ່ວັນອອກໃບຢັ້ງຢືນການກວດກາສະຖານທີ່ປະກອບການຜະລິດ ເພື່ອພິຈາລະນາ ຂຶ້ນທະບຽນສະຖານທີ່ປະກອບການຜະລິດ.

ພາຍຫຼັງທີ່ໄດ້ຮັບຊຸດເອກະສານ ແລະ ໃບຢັ້ງຢືນການກວດກາສະຖານທີ່ປະກອບການຜະລິດ ກົມປູກຝັງ ຕ້ອງພິຈາລະນາອອກໃບທະບຽນສະຖານທີ່ປະກອບການຜະລິດ ພາຍໃນ ຫ້າ ວັນລັດຖະການ ຕາມແບບພິມ ໃນເອກະສານຊ້ອນທ້າຍ 4 ຂອງຄຳແນະນຳສະບັບນີ້ ໃນກໍລະນີສົງໄສ ກົມປູກຝັງຕ້ອງລົງກວດກາປະເມີນສະຖານທີ່ປະກອບການຜະລິດ ກ່ອນຂຶ້ນທະບຽນສະຖານທີ່ປະກອບການຜະລິດ.

ເລກລະຫັດການຂຶ້ນທະບຽນສະຖານທີ່ປະກອບການຜະລິດ ປະກອບດ້ວຍ ເລກທີ, ລະຫັດຟາມຜະລິດ, ລະຫັດແຂວງ, ລະຫັດພືດ ແລະ ເລກທະບຽນເສຍພາສີ.

**2.5. ການນຳໃຊ້ໃບທະບຽນສະຖານທີ່ປະກອບການຜະລິດ**

ໃບທະບຽນສະຖານທີ່ປະກອບການຜະລິດ ເພື່ອການສົ່ງອອກ ແມ່ນນຳໃຊ້ກັບພືດ ແລະ ຜະລິດຕະພັນພືດໃດໜຶ່ງສະເພາະ ມີອາຍຸການນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້. ສຳລັບ ຂັ້ນຕອນ ແລະ ວິທີການຕໍ່ໃບທະບຽນສະຖານທີ່ປະກອບການຜະລິດ ໄດ້ກຳນົດໄວ້ໃນບົດແນະນຳ ຂອງກົມປູກຝັງ.

ໃນກໍລະນີ ມີການເພີ່ມ ຫຼື ຫຼຸດ ສະຖານທີ່ປະກອບການຜະລິດ ລວມທັງ ການປ່ຽນແປງຊະນິດພືດໃໝ່ ຕ້ອງສະເໜີດັດແກ້ໃບທະບຽນສະຖານທີ່ປະກອບການຜະລິດ ໂດຍຜ່ານຂະແໜງປູກຝັງຂັ້ນແຂວງ ເພື່ອພິຈາລະນາ ຕາມຂໍ້ທີ 2 ຂອງຄຳແນະນຳສະບັບນີ້.

ໃນກໍລະນີ ໃບທະບຽນສະຖານທີ່ປະກອບການຜະລິດ ເສຍຫາຍ ຫຼື ຖືກທຳລາຍ, ໃຫ້ເຈົ້າຂອງໃບທະບຽນດັ່ງກ່າວ ແຈ້ງຕໍ່ຂະແໜງປູກຝັງຂັ້ນແຂວງທີ່ກ່ຽວຂ້ອງ ພ້ອມທັງຄັດຕິດໃບແຈ້ງເສຍພາຍໃນກຳນົດເວລາ ສິບສີ່ ວັນ ນັບແຕ່ວັນທີ່ໃບຢັ້ງຢືນ ເສຍຫາຍ ຫຼື ຖືກທຳລາຍ ເປັນຕົ້ນໄປ. ພາຍຫຼັງທີ່ໄດ້ຮັບເອກະສານດັ່ງກ່າວ ກົມປູກຝັງ ຕ້ອງອອກໃບທະບຽນສະຖານທີ່ປະກອບການຜະລິດຄືນໃໝ່ ພາຍໃນເວລາ ສາມ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານສະເໜີຄົບຖ້ວນຖືກຕ້ອງ.

**2.6. ການໂຈະ ຫຼື ຖອນໃບທະບຽນສະຖານທີ່ປະກອບການຜະລິດ**

ກົມປູກຝັງ ເປັນຜູ້ໂຈະ ໃບທະບຽນສະຖານທີ່ປະກອບການຜະລິດ ຕາມມາດຕາ 13 ຂອງຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດ ສຳລັບ ການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2986/ກປ, ລົງວັນທີ 28 ມິຖຸນາ 2019 ໃນກໍລະນີໃດໜຶ່ງດັ່ງນີ້:

1. ມີການສະເໜີຂອງປະເທດນຳເຂົ້າ;
2. ມີການສະເໜີຂອງຜູ້ທີ່ໄດ້ຮັບໃບທະບຽນສະຖານທີ່ປະກອບການຜະລິດ;
3. ມີການລະເມີດ ລະບຽບກົດໝາຍ ແລະ ຄຳແນະນຳສະບັບນີ້ຮ້າຍແຮງ.

ພາຍຫຼັງໄດ້ຮັບແຈ້ງໂຈະຈາກກົມປູກຝັງ, ເຈົ້າຂອງສະຖານທີ່ປະກອບການຜະລິດ ຕ້ອງກວດກາຄືນສາເຫດ ແລະ ຊອກຫາວິທີທາງແກ້ໄຂ ຫຼື ປັບປຸງໃຫ້ຄືນສູ່ສະພາບປົກກະຕິ ຕາມຫຼັກວິຊາການໃນວັນເວລາອັນແນ່ນອນ.

ໃນກໍລະນີ ເຈົ້າຂອງສະຖານທີ່ປະກອບການຜະລິດ ບໍ່ສາມາດແກ້ໄຂ ຫຼື ປັບປຸງພາຍໃນວັນເວລາທີ່ກຳນົດໄວ້ ໃຫ້ກົມປູກຝັງ ຖອນໃບທະບຽນສະຖານທີ່ປະກອບການຜະລິດ ຕາມກົດໝາຍ.

**2.7. ສິດ ແລະ ພັນທະ ຂອງຜູ້ໄດ້ຮັບໃບທະບຽນສະຖານທີ່ປະກອບການຜະລິດ**

ຜູ້ໄດ້ຮັບໃບທະບຽນສະຖານທີ່ປະກອບການຜະລິດ ມີສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບ ວຽກງານຄຸ້ມຄອງສະຖານທີ່ປະກອບການຜະລິດ;
2. ສຶກສາຄົ້ນຄວ້າລະບຽບການ ທີ່ກ່ຽວຂ້ອງກັບສະຖານທີ່ປະກອບການຜະລິດ;
3. ອໍານວຍຄວາມສະດວກໃຫ້ ເຈົ້າໜ້າທີ່ກັກກັນພືດ ເຂົ້າກວດກາສະຖານປະກອບການຜະລິດພືດ ແລະ ສະໜອງເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງ;
4. ປະຕິບັດຕາມ ມາດຕະການຮັກສາຄວາມປອດໄພດ້ານສຸຂານາໄມພືດ ຕາມທີ່ໄດ້ກໍານົດໄວ້ໃນຄູ່ມືດໍາເນີນງານ ກ່ຽວກັບ ການຜະລິດພືດ ແລະ ແບບແຜນການຈັດການສັດຕູພືດຂອງຕົນ;
5. ເກັບຮັກສາຂໍ້ມູນ ກ່ຽວກັບ ສະຖານທີ່ປະກອບການຜະລິດ;
6. ສະເໜີຕໍ່ອົງການທີ່ກ່ຽວຂ້ອງ ຕໍ່ການລະເມີດກົດໝາຍ ແລະ ລະບຽບການ ຂອງພະນັກງານ ແລະ ເຈົ້າໜ້າທີ່;
7. ເສຍຄ່າທໍານຽມ, ຄ່າບໍລິການ ແລະ ພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## IV. ວິທີການຈັດຕັ້ງປະຕິບັດ

1. ກົມປູກຝັງ, ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ໃຫ້ໄດ້ຮັບຜົນດີ;
2. ມອບໃຫ້ກົມປູກຝັງ ສ້າງປຶ້ມຄູ່ມື ແລະ ຝຶກອົບຮົມ ຂະແໜງປູກຝັງຂັ້ນແຂວງ ກ່ຽວກັບ ຫຼັກການ, ຂັ້ນຕອນ ແລະ ວິທີການກວດກາ ແລະ ຂຶ້ນທະບຽນສະຖານທີ່ປະກອບການຜະລິດ;
3. ໃຫ້ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ຊີ້ນໍາ ແລະ ຊຸກຍູ້ ຂະແໜງປູກຝັງຂັ້ນແຂວງ ໃນການກວດກາ ແລະ ຢັ້ງຢືນ ການກວດກາສະຖານທີ່ປະກອບການຜະລິດ;
4. ໃນການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານກະຊວງກະສິກໍາ ແລະ ປ່າໄມ້ ຕາມຂັ້ນຕອນ ເພື່ອພິຈາລະນາຫາວິທີແກ້ໄຂ ຢ່າງທັນການ.

ຄໍາແນະນໍາສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ລັດຖະມົນຕີ

ກະຊວງກະສິກໍາ ແລະ ປ່າໄມ້

ບຸນຂວາງ ຄໍາບຸນເຮືອງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຊື່ບໍລິສັດ(Company)..................... ເລກທີ(No):........../.........

ທີ່ (Place of issue)............ວັນທີ (Date)..........

## ໃບຄຳຮ້ອງ

**ຮຽນ:** ທ່ານຫົວໜ້າກົມປູກຝັງ./Director General of theDepartmentof Agriculture.

**ເລື່ອງ:** ຂໍຂຶ້ນທະບຽນສະຖານທີ່ປະກອບການ ຜະລິດສຳລັບ ການສົ່ງອອກ ພືດ ແລະ ຜະລິດ ຕະພັນພືດ. Application for Establishment Registration for Plant Export.

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016/Pursuant to Law on Plant Protection and Plant Quarantine No 13/NA, dated 15th November 2016);
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດ ສຳລັບ ສົ່ງອອກ ແລະ ສົ່ງອອກຕໍ່ ເລກທີ 2986/ກປ, ລົງວັນທີ 28 ມິຖຸນາ 2019/Pursuant to Ministerial Decision on Phytosanitary Measure for Expor and reexport No2986/MAF dated 28 June 2019.
- ອີງຕາມ ຄຳແນະນຳ ກ່ຽວກັບ ການຂຶ້ນທະບຽນສະຖານທີ່ປະກອບການຜະລິດ ສຳລັບການສົ່ງອອກພືດ ແລະ ຜະລິດຕະພັນພືດ/Pursuant to guidedance on establishment registerion certificate for export plant and plant product ເລກທີ/no 1753/ກປ, ລົງວັນທີ 25 ສິງຫາ 2020

1. ຊື່ ແລະ ນາມສະກຸນຜູ້ຮ້ອງຂໍ (Full Name of applicant) ............................................
2. ຊື່ ແລະ ທີ່ຢູ່ສຳນັກງານ/ບໍລິສັດສົ່ງອອກ (Name and address of company) ...................
   - ບ່ອນຢູ່ປະຈຸບັນບ້ານ (Present address, village) ......................................................
   - ເຮືອນເລກທີ (House No) ............................ ໜ່ວຍ (Unit) ..................................
   - ເມືອງ (District) ......................................... ແຂວງ (Province) ............................
   - ເບີໂທລະສັບ (Telephone No) ........................ ອີເມລ (E-mail) ..............................

3. ມີຈຸດປະສົງຂໍຂຶ້ນທະບຽນສະຖານທີ່ປະກອບການຜະລິດ ສໍາລັບການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ດັ່ງລຸ່ມນີ້ (Purpose to apply for establishment registerion certificate for export plant and plant product ):
   - ຊະນິດພືດທີ່ສົ່ງອອກ (crops intended for export) ......................................................
   - ປະເພດສະຖານທີ່ປະກອບການຜະລິດ (Type of Establishment): ...................................
     ☐ ສວນປູກ ☐ ໂຮງເຮືອນທີ່ຫຸ້ມຫໍ່ ☐ ໂຮງອົບອາຍເຢັນ ຫຼື ບໍາບັດ ☐ ອື່ນໆ ..........
   - ສົ່ງອອກໄປປະເທດ/export to.....................................................................................

4. ປະກອບເອກະສານຄັດຕິດເພື່ອສະເໜີຂໍຂຶ້ນທະບຽນດັ່ງນີ້ /attchedmments for applications:
   - ☐ ສໍາເນົາໃບທະບຽນວິສາຫະກິດ /trued coppy of extrerprise registration;
   - ☐ ສໍາເນົາໃບອະນຸຍາດດໍາເນີນກິດຈະການກະສິກໍາ ແລະ ປ່າໄມ້ /trued coppy of Agriculture and Forestry Business Lisence;
   - ☐ ສໍາເນົາໃບຢັ້ງຢືນການເສຍອາກອນປະຈໍາປີສຸດທ້າຍ /coppy of Tax payment certificate;
   - ☐ ຄູ່ມືການດໍາເນີນງານ ກ່ຽວກັບ ການຜະລິດພືດ ແລະ ແບບແຜນການຈັດການສັດຕູພືດ ຂອງຜູ້ປະກອບການຕາມແບບພິມ ກກພ 18 ໃນເອກະສານຊ້ອນທ້າຍ 2 ຂອງຄໍາແນະນໍາສະບັບນີ້ /Standard Operation of Etablishment as PQD form no 18 in Annex 2 of guidance;
   - ☐ ໃບມອບສິດ ແລະ ສໍາເນົາບັດປະຈໍາຕົວຂອງຜູ້ຢື່ນເອກະສານ ໃນກໍລະນີໃຫ້ຜູ້ອື່ນມາຢື່ນຄໍາຮ້ອງແທນ, letter of Authorizatio if anoher person represent for applicant.

ຂ້າພະເຈົ້າຂໍຢັ້ງຢືນວ່າ ຂໍ້ມູນ ແລະ ເອກະສານທີ່ປະກອບມານີ້ ແມ່ນຖືກຕ້ອງ ແລະ ສອດຄ່ອງຕາມຕົວຈິງ / I certify that the information and document provided on this application is true and correct).

| | |
|---|---|
| **ຢັ້ງຢືນຈາກ ຂະແໜງປູກຝັງແຂວງ**<br>**Certified by head of Agriculture and Forestry Office Province**<br>.......................... | **ລາຍເຊັນ ແລະ ຕາປະທັບບໍລິສັດ**<br>**Signature and stamp of Applicant**<br>.......................... |

# ແບບຮ່າງ ຄູ່ມືແຜນການຜະລິດ ແລະ ການກຳຈັດສັດຕູພືດກັກກັນ ຕາມຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດຂອງປະເທດນຳເຂົ້າ

ຂໍ້ແນະນຳ: ແບບຮ່າງສະບັບນີ້ ນຳໃຊ້ສຳລັບຜູ້ທີ່ຕ້ອງການສະເໜີຂໍຂຶ້ນທະບຽນສະຖານທີ່ປະກອບການຜະລິດ ເພື່ອປະກອບຂໍ້ມູນ ຕາມແຕ່ລະປະເພດ ສະຖານປະກອບການ ໂດຍອີງໃສ່ສະພາບເງື່ອນໄຂຕົວຈິງຂອງຕົນທີ່ມີທາງດ້ານບຸກຄະລາກອນ, ໂຄງລ່າງພື້ນຖານ, ເຄື່ອງມືອຸປະກອນ ແລະ ວິທີການດຳເນີນງານ ທີ່ຕ້ອງມີ ແລະ ຈະຕ້ອງໄດ້ປະຕິບັດ ໃຫ້ຖືກຕ້ອງຕາມຂໍ້ກຳນົດເງື່ອນໄຂຂອງປະເທດນຳເຂົ້າ. ໃນກໍລະນີ ທີ່ທ່ານຕ້ອງການສອບຖາມຄວາມໝາຍຂອງແຕ່ລະຂໍ້ ສາມາດປະສານໄປຍັງຂະແໜງປູກຝັງ ທີ່ກ່ຽວຂ້ອງ ຫຼື ພະແນກກັກກັນພືດ, ກົມປູກຝັງ.

**1. ຂໍ້ມູນສະພາບລວມຂອງ ສະຖານທີ່ປະກອບການ ຜະລິດ**

- ຂໍ້ມູນສະຖານປະກອບການຜະລິດ (ຊື່ເຈົ້າຂອງບໍລິສັດ, ຊື່ບໍລິສັດ, ທີ່ຕັ້ງບໍລິສັດ, ທີ່ຢູ່ຕິດຕໍ່);
- ຈຸດປະສົງເພື່ອ ສົ່ງອອກ ພືດ (ຊື່ທົ່ວໄປ ພາສາລາວ, ຊື່ທົ່ວໄປ ພາສາອັງກິດ ແລະ ຊື່ວິທະຍາສາດ, ສ່ວນຂອງພືດສົ່ງອອກ,  ຊື່ປະເທດ ນຳເຂົ້າ);
- ຂອບເຂດການນຳໃຊ້ ຄູ່ມື ສະບັບນີ້ ສຳລັບ:

  ☐ ສວນປູກ ☐ ໂຮງເຮືອນທີ່ຫຸ້ມຫໍ່ ☐ ໂຮງອົບອາຍເຢັນ ຫຼື ບຳບັດ ☐ ອື່ນໆ ...................

  **ໝາຍເຫດ:** ໃຫ້ປະກອບຂໍ້ມູນວິທີການລະອຽດໃນຂໍ້ 2, 3 ຫຼື ຂໍ້ 4 ຕາມຂອບເຂດທີ່ເລືອກໝາຍຂ້າງເທິງນັ້ນ;
- ຂໍ້ມູນລາຍຊື່ສັດຕູພືດກັກກັນ ເປົ້າໝາຍຄວບຄຸມຂອງປະເທດນຳເຂົ້າ (ຂໍ້ມູນແຕ່ລະສັດຕູພືດ, ຮູບພາບວົງຈອນຊີວິດ ໃຫ້ຄັດຕິດ ເອກະສານໃຫ້ຂໍ້ມູນລະອຽດເພື່ອການຕິດຕາມ ແລະ ຈຳແນກ ໃນຂະບວນການຜະລິດ);
- ຂໍ້ມູນມາດຕະການດ້ານສຸຂານາໄມ ແລະ ການບຳບັດທີ່ປະເທດນຳເຂົ້າບັງຄັບໃຫ້ປະຕິບັດ (ໃຫ້ຄັດຕິດລະບຽບການ ຫຼື ຂໍ້ກຳນົດເງື່ອນໄຂການນຳເຂົ້າທີ່ເປັນບ່ອນອີງ);
- ຂໍ້ມູນ ລະບົບການບໍລິຫານຂອງສະຖານທີ່ປະກອບການ ( ລະບົບໂຄງຮ່າງການຈັດຕັ້ງລະບົບຄຸ້ມຄອງບໍລິຫານ ແລະ ວິຊາການ, ການແບ່ງໜ້າທີ່ຮັບຜິດຊອບ ໃນການຈັດການບໍລິການ ).

**2. ຂໍ້ມູນ ແລະ ວິທີການປະຕິບັດຢູ່ສວນປູກ**

- ຊື່ ແລະ ຂໍ້ມູນການສຶກສາ ນັກວິຊາການປ້ອງກັນພືດ ແລະ ນັກວິຊາການປູກຝັງ ປະຈຳສວນປູກ;
- ຂໍ້ມູນເຄື່ອງມືອຸປະກອນ ນຳໃຊ້ໃນການຜະລິດ ແລະ ການປ້ອງກັນພືດ;
- ຂໍ້ມູນແນວພັນທີນຳໃຊ້(ຊື່, ແຫຼ່ງທີ່ມາ, ເລກທີຂຶ້ນທະບຽນກົມປູກຝັງ, ຄຸນລັກສະນະຂອງແນວພັນ, ຮູບປະກອບ);
- ຂໍ້ມູນສວນປູກ(ທີ່ຕັ້ງ,ເນື້ອທີ່ ແລະ ແຜນທີ່ສະແດງທີ່ຕັ້ງແປງປູກຂອງສວນ,ປະຕິທິນການປູກ ແລະ ການເກັບກ່ຽວ);
- ວິທີການເຝົ້າລະວັງ ແລະ ຄວບຄຸມສັດຕູພືດຕະຫຼອດໄລຍະເວລາການປູກພືດ (ວິທີການສຳຫຼວດ ແລະ ປະເມີນ);
- ບັນທຶກ ຂໍ້ມູນການນຳໃຊ້ຢາປາບສັດຕູພືດເຄມີ ແລະ ເຄມີກະສິກຳອື່ນໆ (ຊື່ສານເຄມີ, ເລກລະຫັດຂຶ້ນທະບຽນກົມປູກຝັງ, ອັດຕາການນຳໃຊ້, ເວລາ ແລະ ຄວາມຖີ່ ການນຳໃຊ້, ທີ່ຢູ່ຫ້ອງວິໄຈວິເຄາະສານພິດຕົກຄ້າງ);
- ມາດຕະການສຸຂານາໄມພືດ ຄວບຄຸມການຕິດແປດສັດຕູພືດກັກກັນ ກ່ອນ ແລະ ຫຼັງການເກັບກ່ຽວ;
- ວິທີການສຸ່ມ ແລະ ຕິດຕາມຄວບຄຸມພິດຕົກຄ້າງຂອງຢາປາບສັດຕູພືດ ແລະ ສັດຕູພືດກັກກັນຕິດແປດຈາກສວນປູກ;
- ວິທີການກຳຈັດສິ່ງເສດເຫຼືອພືດ ແລະ ຜະລິດຕະພັນພືດ ທີ່ຕິດແປດສັດຕູພືດ ແລະ ອານາໄມສວນປູກ;
- ວິທີໃສ່ລະຫັດຈຳແນກແຫຼ່ງທີ່ມາຂອງຜະລິດຕະພັນ ຈາກແປງປູກ ແລະ ການບັນທຶກ;
- ວິທີການຂົນສົ່ງ ແລະ ມາດຕະການປ້ອງກັນການຕິດແປດສັດູພືດ, ການປົນເປື້ອນ;
- ວິທີການເພື່ອກວດສອບ ແລະ ມາດຕະການແກ້ໄຂໃນການລະນີມີການແຈ້ງເຕືອນບັນຫາສັດຕູພືດຕິດແປດ;
- ແຜນວາດຂະບວນການດຳເນີນງານທັງໝົດໃນຂະບວນການຜະລິດ ແລະ ຜູ້ຮັບຜິດຊອບ.

3. **ຂໍ້ມູນ ແລະ ວິທີການປະຕິບັດໂຮງອົບອາຍເຢັນ ຫຼື ສະຖານປະກອບການບໍາບັດພືດ ປະເພດອື່ນ**
- ຊື່ ແລະ ຂໍ້ມູນການຝຶກອົບຮົມວິຊາການ ເຮັດການບໍາບັດ (ໃບຢັ້ງຢືນ, ບັດວິຊາການ);
- ສະຖານທີ່, ໂຄງຮ່າງພື້ນຖານ ແລະ ເຄື່ອງມືອຸປະກອນ ນໍາໃຊ້ໃນການບໍາບັດສັດຕູພືດກັກກັນ (ໃຫ້ອະທິບາຍທີ່ຕັ້ງແລະລັກສະນະ, ແຜນວາດ ສະຖານທີ່ ໂຄງຮ່າງພື້ນຖານ, ບັນຊີລາຍການ ອຸປະກອນເຕັກນິກ ແລະ ເຄື່ອງປ້ອງກັນໄພ, ຄູ່ມືການນໍາໃຊ້ ແລະ ການບົວລະບັດຮັກສາ);
- ວິທີການການບໍາບັດ(ຂັ້ນຕອນການກະກຽມ,ການຮັກສາຄວາມປອດໄພ,ຂໍ້ກໍານົດໃນການບໍາບັດ,ການວັດແທກ);
- ວິທີການບັນທຶກ(ບົດລາຍງານການບໍາບັດ,ຂໍ້ມູນສິນຄ້າພືດເຂົ້າ-ອອກໃນການບໍາບັດ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງ);
- ວິທີການເກັບຮັກສາ ແລະ ຂົນສົ່ງຊຸດສິນຄ້າ ພາຍຫຼັງບໍາບັດ;
- ແຜນວາດຂະບວນການດໍາເນີນງານທັງໝົດໃນຂະບວນບໍາບັດ ແລະ ຜູ້ຮັບຜິດຊອບ.

4. **ຂໍ້ມູນ ແລະ ວິທີການປະຕິບັດຢູ່ໂຮງເຮືອນຫຸ້ມຫໍ່**
- ຊື່ ແລະ ຂໍ້ມູນການສຶກສາຂອງ ວິຊາການປ້ອງກັນພືດ ແລະ ວິຊາການປູກຝັງ ປະຈໍາໂຮງເຮືອນຫຸ້ມຫໍ່;
- ເຄື່ອງມືອຸປະກອນ (ໃຊ້ໃນການຫຸ້ມຫໍ່, ຕິດຕາມ, ກວດກາ ແລະ ການກໍາຈັດສັດຕູພືດກັກກັນ);
- ວິທີການກວດກາ ແຫຼ່ງທີ່ມາ ແລະ ຄວາມສອດຄ່ອງຂອງຜົນຜະລິດພືດ;
- ມາດຕະການສຸຂານາໄມພືດ ແລະ ມາດຕະການຄວບຄຸມການຕິດແປດສັດຕູພືດກັກກັນ;
- ບັນທຶກ ຂໍ້ມູນການໃຊ້ຢາປາບສັດຕູພືດ ເຄມີ ກໍາຈັດສັດຕູພືດ ແລະ ເຄມີກະສິກໍາອື່ນໆ (ຊື່ສານເຄມີ, ເລກລະຫັດຂຶ້ນທະບຽນກົມປູກຝັງ, ອັດຕາການນໍາໃຊ້, ຄວາມຖີ່);
- ວິທີ ການສຸ່ມຕົວຢ່າງ ແລະ ຕິດຕາມພິດຕົກຄ້າງຂອງຢາປາບສັດຕູພືດ ແລະ ສັດຕູພືດກັກກັນຕິດແປດຈາກສວນປູກ (ເວລາ, ຄວາມຖີ່ ແລະ ວິທີການ ຕິດຕາມກວດກາ, ທີ່ຢູ່ຫ້ອງວິໄຈວິເຄາະສານພິດຕົກຄ້າງ);
- ວິທີການກໍາຈັດສິ່ງເສດເຫຼືອ ແລະ ຜະລິດຕະພັນທີ່ຕິດແປດສັດຕູພືດ;
- ວິທີໃສ່ລະຫັດຈໍາແນກແຫຼ່ງທີ່ມາຂອງຜະລິດຕະພັນ ຈາກສວນປູກ ຫຼື ສະຖານບໍາບັດພືດ;
- ວິທີການບັນທຶກ ເພື່ອກວດຫາແຫຼ່ງທີ່ມາຂອງຜົນຜະລິດ ແລະ ຊຸດສິນຄ້າຫຸ້ມຫໍ່ແລ້ວ (ບັນຊີຟາມ, ສັນຍາຊື້ຂາຍ, ບັນທຶກຂໍ້ມູນການສົ່ງສິນຄ້າ ແລະ ວິທີການບັນທຶກອື່ນໆ);
- ຮູບແບບສະຫຼາກ (ເນື້ອໃນ, ຂະໜາດ ແລະ ວິທີການຕິດສະຫຼາກ);
- ວິທີການເກັບຮັກສາ ແລະ ຂົນສົ່ງຊຸດສິນຄ້າ (ອະທິບາຍ ສະຖານທີ່, ວິທີການປ້ອງກັນການປົນເປື້ອນ ແລະ ຕິດແປດສັດຕູພືດ, ການຈັດການສັດຕູພືດໃນເລົ້າສາງ, ການຮັກສາຄວາມສະອາດ, ການບັນທຶກ ແລະ ວິທີການຂົນສົ່ງ);
- ວິທີການເພື່ອກວດສອບ ແລະ ມາດຕະການປະຕິບັດ ຕໍ່ແຫຼ່ງທີ່ມາ ຂອງຜົນຜະລິດພືດ ໃນການລະນີມີການແຈ້ງເຕືອນບັນຫາການຕິດແປດສັດຕູພືດ ຄວບຄຸມ ຫຼື ຂໍ້ມູນບໍ່ຖືກຕ້ອງ;
- ແຜນວາດຂະບວນການດໍາເນີນງານທັງໝົດໃນໂຮງເຮືອນຫຸ້ມຫໍ່ ແລະ ຜູ້ຮັບຜິດຊອບ.

5. **ຂໍ້ມູນ ແລະ ວິທີການ ສໍາລັບສະຖານທີ່ປະກອບການຜະລິດອື່ນ**
- ຊື່ ແລະ ຂໍ້ມູນການສຶກສາຂອງ ວິຊາການປ້ອງກັນພືດ ແລະ ວິຊາການປູກຝັງ ປະຈໍາໂຮງເຮືອນຫຸ້ມຫໍ່;
- ເຄື່ອງມືອຸປະກອນ ນໍາໃຊ້ໃນຂະບວນການຫຸ້ມຫໍ່, ຕິດຕາມ ແລະ ການກໍາຈັດສັດຕູພືດກັກກັນ;
- ວິທີການ ຕິດຕາມຄວບຄຸມ ພິດຕົກຄ້າງຂອງຢາປາບສັດຕູພືດ ແລະ ສັດຕູພືດກັກກັນຕິດແປດ;
- ວິທີການບັນທຶກ ເພື່ອກວດຫາແຫຼ່ງທີ່ມາຂອງຜົນຜະລິດ ແລະ ຊຸດສິນຄ້າຫຸ້ມຫໍ່ແລ້ວ;
- ວິທີການເກັບຮັກສາ ແລະ ຂົນສົ່ງຊຸດສິນຄ້າ.

**ລາຍເຊັນ ແລະ ຕາປະທັບບໍລິສັດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ (Province)...............................

ພະແນກກະສິກຳ ແລະ ປ່າໄມ້ (Provincial Agriculture and Forestry Office)

ຂະແໜງປູກຝັງ (Provincial Agriculture Section) ເລກທີ (No):............../ປຝຂ (PAS).

# ໃບຢັ້ງຢືນການກວດກາ

# ສະຖານທີ່ປະກອບການຜະລິດ ສຳລັບການສົ່ງອອກ ພືດ ແລະ ຜະລິດຕະພັນພືດ

# (Establishment Inspection Certificate for export Plant and Plant Products)

- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016\Pursuant to Law on Plant Protection and Plant Quarantine No 13/NA, dated $15^{th}$ November 2016);
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດ ສຳລັບ ສົ່ງອອກ ແລະ ສົ່ງອອກຕໍ່ ເລກທີ 2986/ກປ, ລົງວັນທີ 28 ມິຖຸນາ 2019\ Pursuant to Ministerial Decision on Phytosanitary Measure for Expor and reexport No2986/MAF dated 28 June 2019.
- ອີງຕາມ ໃບຄຳຮ້ອງຂໍຂຶ້ນທະບຽນ ສະຖານທີ່ປະກອບການຜະລິດສຳລັບການສົ່ງອອກພືດ ແລະ ຜະລິດຕະພັນພືດ / Pursuant to application for establishment registration for plant export ເລກທີ .........ວັນທີ..........

ຂະແໜງປູກຝັງ ອອກໃບຢັ້ງຢືນການກວດກາສະຖານປະກອບການຜະລິດ ສຳລັບ ສົ່ງອອກພືດ ແລະ ຜະລິດຕະພັນພືດ ໃຫ້ແກ່\Provincial Agriculture Section inspect and certify establishment for export that:

1. ຊື່ບຸກຄົນ ຫຼື ການຈັດຕັ້ງດຳເນີນກິດຈະການ (Name of operator): ______________________
2. ຊື່ບໍລິສັດ /company name________________________________________________
3. ຊື່ເຈົ້າຂອງກິດຈະການ (Name of business owner): ______________________________
4. ປະເພດກິດຈະການ (Type of Establishment): ________ ສົ່ງອອກໄປ /export to_________
5. ທີ່ຕັ້ງກິດຈະການ (Address of Establishment): ບ້ານ /Villag ________________________

   ເມືອງ District, ___________ ແຂວງ / Province ____________ ເບີໂທ /Tel___________

ວັນເດືອນປີອອກໃບຢັ້ງຢືນ (Date of issue) :..................................................

ວັນເດືອນປີໝົດອາຍຸ (Date of expiry) :..........................................................

**ຫົວໜ້າຂະແໜງປູກຝັງ**

**Head of Agriculture Sector**

**ໝາຍເຫດ (Notice):**

- ຜູ້ທີ່ໄດ້ຮັບໃບຢັ້ງຢືນ ຕ້ອງດຳເນີນກິດຈະການຕາມການອະນຸຍາດ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ເງື່ອນໄຂປະເທດນຳເຂົ້າ.
  (Certified establishment shall comply with related laws and regulations of Lao PDR and obliged to comply with import requirements).
- ຫ້າມເອົາໃບຢັ້ງຢືນນີ້ໃຫ້ຜູ້ອື່ນນຳໃຊ້, ຖ້າຜູ້ໃດລະເມີດ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ຕາມລະບຽບກົດໝາຍ ຂອງ ສປປ ລາວ (this Certificate cannot be used by other persons who are not the certificate holder. If there is a violation of this use, the law and regulations shall be applied).

ເອກະສານຊ້ອນທ້າຍ: 4 ຂອງຄຳແນະນຳ ເລກທີ 1753/ກປ, ລົງວັນທີ 25 ສິງຫາ 2020

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ (Ministry of Agriculture and Forestry)

ກົມປູກຝັງ (Department of Agriculture) ເລກທີ (No):............../ກປຝ(DOA)

# ໃບທະບຽນ

## ສະຖານທີ່ປະກອບການຜະລິດ ສຳລັບ ການສົ່ງອອກພືດ ແລະ ຜະລິດຕະພັນພືດ

## (Establishment Registration for export Plant and Plant Products)

- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ(ສະບັບປັບປຸງ) ເລກທີ 13/ສພຊ, ລົງວັນທີ15 ພະຈິກ 2016\Pursuant to Law on Plant Protection and Plant Quarantine No 13/NA, dated 15th November 2016);
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດ ສຳລັບສົ່ງອອກ ແລະ ສົ່ງອອກຕໍ່ ເລກທີ 2986/ກປ, ລົງວັນທີ 28 ມິຖຸນາ 2019\Ministerial Decision on Phytosanitary Measure for Expor and reexport No2986/MAF dated 28 June 2019;
- ອີງຕາມ ໃບຢັ້ງຢືນການກວດກາ ສະຖານທີ່ປະກອບການຜະລິດສຳລັບການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ເລກທີ...........ປຝຂ/Establishment Inspection Certificate for export Plant and Plant Products No................/PAS

ກົມປູກຝັງ ອອກໃບທະບຽນສະຖານປະກອບການຜະລິດ ສຳລັບ ການສົ່ງອອກພືດ ແລະ ຜະລິດຕະພັນພືດ ໃຫ້ແກ່:

Department of Agriculture certify establishment for export that:

1. ຊື່ບຸກຄົນ ຫຼື ການຈັດຕັ້ງດຳເນີນກິດຈະການ (Name of operator): ____________________
2. ຊື່ບໍລິສັດ /company name______________________________________________
3. ຊື່ເຈົ້າຂອງກິດຈະການ (Name of business owner):_____________________________
4. ປະເພດກິດຈະການ (Type of Establishment): _______ສົ່ງອອກໄປ/export to_________
5. ທີ່ຕັ້ງກິດຈະການ (Address of Establishment): ບ້ານ/Villag________ເມືອງ District, ________ ແຂວງ/ Province _____________ ເບີໂທ/Tel_____________

ວັນເດືອນປີອອກໃບທະບຽນ (Date of issue): .....................................................

ວັນເດືອນປີໝົດອາຍຸໃບທະບຽນ (Date of expiry): ................................................

ເລກລະຫັດໃບທະບຽນ (Code of Registration): 0000/F,P,S/00/00.00/00

**ຫົວໜ້າກົມປູກຝັງ**

**Director General**

**ໝາຍເຫດ (Notice):**

- ຜູ້ທີ່ໄດ້ຮັບໃບຢັ້ງຢືນ ຕ້ອງເອົາໃຈໃສ່ດຳເນີນກິດຈະການໃຫ້ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປລາວ ແລະ ຕ້ອງປະຕິບັດຕາມເງື່ອນໄຂການນຳເຂົ້າ; (Registered establishment shall comply with related laws and regulations of Lao PDR and obliged to comply with import requirements);
- ຫ້າມເອົາໃບຢັ້ງຢືນນີ້ໃຫ້ຜູ້ອື່ນນຳໃຊ້, ຖ້າຜູ້ໃດລະເມີດ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບ ໃໝ ຫຼື ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກຕາມລະບຽບກົດໝາຍ ຂອງ ສປປ ລາວ. (Registration cannot be used by other persons who are not the certificate holder. If there is a violation of this use, the law and regulations shall be applied).